ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາມະຫາຊົນ ມະຫາຊົນ

ເອກະສານລາຍງານການເງິນປະຈຳໄຕມາດ 03

ສິ້ນສຸດວັນທີ 30 ກັນຍາ 2026

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ໃບລາຍງານຖານະການເງິນ

ສຳລັບຮອບເວລາລາຍງານ ໄຕມາດ 03 ສິ້ນສຸດວັນທີ 30 ກັນຍາ 2026

	ບົດອະທິບາຍ	ທີ່ບທວນຄືນ 30 ກັນຍາ 2026 ລ້ານກີບ	ກວດສອບແລ້ວ 31 ທັນວາ 2025 ລ້ານກີບ
ຊັບສິນ			
ຊັບສິນໝຸນວຽນ			
ເງິນສົດ ແລະ ລາຍການທຽບເທົ່າເງິນສົດ	3	187	186
ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ	4	470,729	498,124
ເຄື່ອງໃຊ້ສາງ		318	318
ຊັບສິນໝຸນວຽນອື່ນໆ	6	289	304
ລວມຊັບສິນໝຸນວຽນ		**471,524**	**498,932**
ຊັບສິນບໍ່ໝຸນວຽນ			
ທີ່ດິນ, ອາຄານ ແລະ ອຸປະກອນ, ສຸດທິ	7	322,742	308,181
ຊັບສິນບັດຄີ່ງທີ່ ເພື່ອການລົງທຶນ	5	189,442	189,442
ເງິນໃຫ້ກູ້ຢືມໄລຍະຍາວແກ່ພາກສ່ວນທີ່ກ່ຽວຂ້ອງ		505	505
ລວມຊັບສິນບໍ່ໝຸນວຽນ		**512,688**	**498,128**
ລວມຊັບສິນ		**984,212**	**997,060**
ໜີ້ສິນ ແລະ ທຶນ			
ໜີ້ສິນ			
ໜີ້ສິນໝຸນວຽນ			
ໜີ້ຕ້ອງສົ່ງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ	8	48,620	92,970
ໜີ້ກູ້ຢືມໄລຍະຍາວ ໝຸນວຽນ	9	154,596	154,596
ອາກອນກຳໄລຄ້າງຈ່າຍ	10	5,640	6,074
ໜີ້ສິນໝຸນວຽນອື່ນໆ	11	66,477	58,099
ລວມໜີ້ສິນໝຸນວຽນ		**275,334**	**311,739**
ໜີ້ສິນບໍ່ໝຸນວຽນ			
ເງິນກູ້ຢືມໄລຍະຍາວ		-	-
ລວມໜີ້ສິນບໍ່ໝຸນວຽນ		-	-
ລວມໜີ້ສິນ		**275,334**	**311,739**
ທຶນ			
ທຶນຈົດທະບຽນ	12	582,000	582,000
ສ່ວນເກີນມູນຄ່າຮຸ້ນ	12	12,540	12,540
ກຳໄລ/(ຂາດທຶນ) ສະສົມ		-	
ສຳຮອງຕາມລະບຽບການ	13	24,801	24,801
ລໍຖ້າແບ່ງປັນ		89,537	65,980
ລວມທຶນ		**708,878**	**685,321**
ລວມໜີ້ສິນ ແລະ ທຶນ		**984,212**	**997,060**

ໂຍທຸທ່ານ
ບໍລິສັດ
ພູສີກໍ່ສ້າງ ແລະ ພັດທະນາ
ມະຫາຊົນ
Phousy Construction and Development Public Company

ທ່ານ ແພງ ດວງເງິນ
ຜູ້ອຳນວຍການໃຫຍ່
ວັນທີ: 10 ພະຈິກ 2026

ທ່ານ ນ ໄຣທອງ ພົມມະຈິດ
ຫົວໜ້າພະແນກການເງິນ ແລະ ບັນຊີ
ວັນທີ: 10 ພະຈິກ 2026

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນແຕ່ໜ້າ 5-16 ເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ

ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ
ໃບລາຍງານຜົນໄດ້ຮັບ
ສຳລັບຮອບເວລາລາຍງານ ໄຕມາດ 03 ສິ້ນສຸດວັນທີ 30 ກັນຍາ 2026

	ບິດ ອະທິບາຍ	ທີ່ບທວນຄືນ 30 ກັນຍາ 2026 ລ້ານກີບ	ທີ່ບທວນຄືນ 30 ກັນຍາ 2025 ລ້ານກີບ
ລາຍຮັບຈາກການກໍ່ສ້າງ		-	-
ຕົ້ນທຶນໃນການກໍ່ສ້າງ		(9)	-
ກຳໄລເບື້ອງຕົ້ນ		**(9)**	**-**
ກຳ ໄ ຈາກການຂາຍຊັບສິນ		-	13,261
ຂາດທຶນຈາກການຂາຍພັນທະບັດ		-	-
ຂາດທຶນຈາກການປັ້ນຄືນຂອງດອກເບ້ຍຄ້າງຮັບ		-	-
(ຂາດທຶນ)ກຳ ໄ ຈາກຄ່າເຜື່ອບັນຊີໜີ້ສິງໃສ ຈະສູນ, ສຸດທ		15,913	-
ລາຍຮັບຄ່າເຊົ່າດິນ		2,290	2,290
ກຳ ໄ ຈາກການກັບລາຍການອາກອນ		-	-
ລາຍຮັບທາງການເງິນ		1	-
ລາຍຈ່າຍບໍລິຫານ		(859)	(749)
(ຂາດທຶນ)/ກຳ ໄ ຈາກອັດຕາແລກປ່ຽນ		-	-
ລາຍຈ່າຍທາງດ້ານການເງິນ		(3,521)	(4,062)
ກຳໄລກ່ອນລາຍຈ່າຍອາກອນກຳໄລ		**13,815**	**10,740**
ອາກອນກຳໄລ		**-**	**-**
ກຳໄລສຳລັບປີ		**13,815**	**10,740**
ກຳໄລຕໍ່ຮຸ້ນ			
ກຳ ໄ ພື້ນຖານຕໍ່ຮຸ້ນ	13	17.80	13.84

ທ່ານ ແພງ ດວງເງິນ
ຜູ້ອຳນວຍການໃຫຍ່
ວັນທີ: 10 ພະຈິກ 2026

ທ່ານ ນ ໄຮທອງ ພິມມະຈິດ
ຫົວໜ້າພະແນກການເງິນ ແລະ ບັນຊີ
ວັນທີ: 10 ພະຈິກ 2026

ບໍລິສັດ ພຸສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ

ໃບລາຍງານການປ່ຽນແປງທຶນ

ສຳລັບຮອບເວລາລາຍງານ ໄຕມາດ 03 ສິ້ນສຸດວັນທີ 30 ກັນຍາ 2026

	ບົດອະທິບາຍ	ທຶນຈົດທະບຽນ ລ້ານກີບ	ສ່ວນເພີ່ມມູນຄ່າຮຸ້ນ ລ້ານກີບ	ກຳໄລ/(ຂາດທຶນ) ສະສົມ ສຳຮອງຕາມລະບຽບການ ລ້ານກີບ	ກຳໄລ/(ຂາດທຶນ) ສະສົມ ບໍ່ໄດ້ຈັດສັນ ລ້ານກີບ	ລວມ ລ້ານກີບ
ໃນວັນທີ 01 ມໍລະກົດ 2025	11	**582,000**	**12,540**	**21,147**	**32,635**	**648,322**
ກຳໄລພາຍໃນຮອບເວລາ	13	-	-	-	10,740	10,740
ສຳຮອງຕາມລະບຽບການ					-	-
ແບ່ງປັນຜົນກຳໄລ		-	-	-	-	-
ຍອດເຫຼືອໃນວັນທີ 30 ກັນຍາ 2025 - ກ່ອນກວດສອບ		**582,000**	**12,540**	**21,147**	**43,375**	**659,062**
ໃນວັນທີ 01 ມໍລະກົດ 2026	11	**582,000**	**12,540**	**24,801**	**75,722**	**695,063**
ກຳໄລພາຍໃນຮອບເວລາ		-	-	-	13,815	13,815
ສຳຮອງຕາມລະບຽບການ					-	-
ແບ່ງປັນຜົນກຳໄລ		-	-	-	-	-
ຍອດເຫຼືອໃນວັນທີ 30 ກັນຍາ 2026 - ກ່ອນກວດສອບ		**582,000**	**12,540**	**24,801**	**89,537**	**708,878**

ທ່ານ ແພງ ດວງເງິນ
ຜູ້ອຳນວຍການໃຫຍ່
ວັນທີ: 10 ພະຈິກ 2026

ທ່ານ ນ ໄຣທອງ ພົມມະຈິດ
ຫົວໜ້າພະແນກການເງິນ ແລະ ບັນຊີ
ວັນທີ: 10 ພະຈິກ 2026

ບົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນແຕ່ໜ້າ 5-16 ເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ

ບໍລິສັດ ພຸລີກໍ່ສ້າງ ແລະ ພັດທະນາ ມະຫາຊົນ
ໃບລາຍງານກະແສເງິນສົດ
ສຳລັບຮອບເວລາລາຍງານ ໄຕມາດ 03 ສິ້ນສຸດວັນທີ 30 ກັນຍາ 2026

	ຍົດອະທິບາຍ	ທີ່ຍທວນຄົນ 30 ກັນຍາ 2026 ລ້ານກີບ	ທີ່ຍທວນຄົນ 30 ກັນຍາ 2025 ລ້ານກີບ
ກະແສເງິນສົດຈາກກິດຈະກຳການດຳເນີນງານ			
ກຳໄລກ່ອນອາກອນກຳໄລ		13,815	10,740
ການດັດແກ້:		-	
- ຂາດທຶນ/(ກຳໄລ) ຈາກອັດຕາແລກປ່ຽນເງິນຕາຕ່າງປະເທດ		-	-
- ຄ່າຫລ້ຍຫ້ຽນ		-	84
- ລາຍຈ່າຍທາງການເງິນ		3,521	4,062
- ກຳໄລຈາກການຂາຍຊັບສິນ		-	-
- ກຳໄລຈາກຄ່າເຜື່ອບັນຊີໜີ້ສິງໄລຈະສຸມ, ສຸດທ		(15,913)	-
ກຳໄລ/(ຂາດທຶນ) ຈາກການດຳເນີນງານກ່ອນການປ່ຽນແປງທຶນໝຸນວຽນ		**1,423**	**14,886**
ການປ່ຽນແປງຊັບສິນດຳເນີນງານ:			
- ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ		35,263	(10,687)
- ຊັບສິນໝຸນວຽນອື່ນໆ		-	1
ການປ່ຽນແປງໜີ້ສິນດຳເນີນງານ:		-	
- ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ		(52,853)	(2,987)
- ໜີ້ສິນໝຸນວຽນອື່ນໆ		(1,830)	(369)
ເງິນສົດທີ່ໄດ້ມາຈາກກິດຈະກຳດຳເນີນງານ		**(17,997)**	**844**
ອາກອນກຳໄລທີ່ຈ່າຍ		-	-
ເງິນສົດທີ່ໄດ້ມາຈາກກິດຈະກຳດຳເນີນງານ, ສຸດທ		**(17,997)**	**844**
ເງິນສົດທີ່ໄດ້ມາຈາກກິດຈະກຳການລົງທຶນ			
ຮັບເງິນຈາກການຂາຍຊັບສິນ		-	-
ເງິນສົດທີ່ໄດ້ມາຈາກກິດຈະກຳການລົງທຶນ, ສຸດທ		-	-
ເງິນສົດທີ່ໄດ້ມາຈາກກິດຈະກຳການເງິນ			
ລາຍຮັບຈາກການກູ້ຢືມ		-	-
ຊຳລະຄືນເງິນກູ້ຢືມ		-	-
ລາຍຈ່າຍທາງດ້ານການເງິນ		-	-
ກະແສເງິນສົດທີ່ໃຊ້ໄປໃນກິດຈະກຳການເງິນ, ສຸດທ		-	-
ການຫລຸດລົງຈາກເງິນສົດ ແລະ ລາຍການທຽບເທົ່າເງິນສົດ, ສຸດທ		**(2,084)**	**(69)**
ເງິນສົດ ແລະ ລາຍການທຽບເທົ່າເງິນສົດຕົ້ນຮອບເວລາ	3	2,272	180
ຜົນຂອງອັດຕາແລກປ່ຽນເງິນສົດ ແລະ ລາຍການທຽບເທົ່າເງິນສົດ		-	-
ເງິນສົດ ແລະ ລາຍການທຽບເທົ່າເງິນສົດໃນຮອບເວລາ		**187**	**111**

ທ່ານ ແພງ ດວງເງິນ
ຜູ້ອຳນວຍການໃຫຍ່
ວັນທີ: 10 ພະຈິກ 2026

ທ່ານ ບ ໄຊທອງ ພົມມະຈັດ
ຫົວໜ້າພະແນກການເງິນ ແລະ ບັນຊີ
ວັນທີ: 10 ພະຈິກ 2026

ຍົດອະທິບາຍຊ້ອນທ້າຍເອກະສານລາຍງານການເງິນແຕ່ໜ້າ 05-16 ເປັນພາກສ່ວນໜຶ່ງຂອງເອກະສານລາຍງານການເງິນ

1. ຂໍ້ມູນທົ່ວໄປ

ບໍລິສັດ ພູສີ ກໍ່ສ້າງ ແລະ ພັດທະນາ ມະຫາຊົນ ແມ່ນບໍລິສັດມະຫາຊົນ, ທີ່ຢູ່ຈົດທະບຽນຂອງບໍລິສັດແມ່ນຕັ້ງຢູ່ ໂຮງແຮມ ຄອນທີ ແນນ ໂທພຣາ, ບ້ານໜອງບົວທອງໃຕ້, ເມືອງ ສີໂຄດຕະບອງ, ນະຄອນຫຼວງວຽງຈັນ ສປປ ລາວ.
ບໍລິສັດດຳເນີນກິດຈະການດ້ານການກໍ່ສ້າງ, ສ້ອມແປງ ແລະ ບຸລະນະຫົນທາງ, ຂົວ ແລະ ອື່ນໆ, ມີພຽງລູກຄ້າດຽວ ກໍ່ຄື ລັດຖະບານ ຂອງ ສປປ ລາວ (ລັດຖະບານລາວ).

ບໍລິສັດ ໄດ້ຈົດທະບຽນເຂົ້າຕະຫຼາດຫຼັກຊັບ ໃນວັນທີ 10 ຕຸລາ 2017.

ເອກະສານລາຍງານທາງການເງິນນີ້ໄດ້ຜ່ານການອະນຸມັດໂດຍຄະນະຜູ້ບໍລິຫານ ໃນວັນທີ 10 ພະຈິກ 2026.

2. ນະໂຍບາຍທາງດ້ານການບັນຊີທີ່ສຳຄັນ

ນະໂຍບາຍທາງການບັນຊີທີ່ໄດ້ນຳໃຊ້ໃນການກະກຽມເຂົ້າໃນເອກະສານລາຍງານການເງິນມີດັ່ງລຸ່ມນີ້:

2.1 ພື້ນຖານໃນການກະກຽມ

ເອກະສານລາຍງານການເງິນ ໄດ້ມີການກະກຽມຕາມວິທີການບັນຊີຂອງບໍລິສັດທີ່ໄດລະບຸໄວ້ ໃນບົດອະທິບາຍຊ້ອນທ້າຍຂໍ້ ທີ2 ຂອງເອກະສານລາຍງານການເງິນສະບັບນີ້ເຊິ່ງໄດມີການສ້າງຂຶ້ນ ບົນພື້ນຖານຕົ້ນທຶນເດີມ.

ອີງຕາມກົດໝາຍບັນຊີສະບັບເລກທີ 47/ສພຊ ລົງວັນທີ 26 ທັນວາ 2013, ວິສາຫະກິດ ທີ່ຮັບໃຊ້ຜົນປະໂຫຍດ ສາທາລະນະ (PIEs) ຕ້ອງໄດ້ປະຕິບັດມາດຕະຖານການລາຍງານການເງິນສາກົນ IFRS . ເຖິງຢ່າງໃດກ່ຕາມ, ກະຊວງການ ເງິນໄດ້ອອກແຈ້ງການສະບັບເລກທີ 1137/ກງ ລົງວັນທີ 27 ເມສາ 2020 ແລະ ຈາກສຳນັກງານຄະນະກຳມະການຄຸ້ມຄອງ ຫຼັກຊັບ (ສຄຄຊ) ລົງວັນທີ 25 ພຶດສະພາ 2020, ຊຶ່ງໃຫ້ທາງເລືອກສຳລັບ ບໍລິສັດທີ່ຈົດທະບຽນໃນຕະຫຼາດຫຼັກຊັບ ເພື່ອ ກະກຽມເຮັດແຜນປະຕິບັດການ ໃນການນຳໃຊ້ IFRS ພາຍໃນໄລຍະເວລາສີ່ປີ. ເຖິງຢ່າງໃດກ່ຕາມ, ບໍລິສັດທີ່ຈົດທະບຽນ ໃນຕະຫຼາດຫຼັກຊັບ ຄວນປະຕິບັດການ ໃນການນາໃຊ້ IFRS ຕັ້ງແຕ່ວັນທີ 1 ມັງກອນ 2026 ເປັນຕົ້ນໄປ.

ຜູ້ບໍລິຫານກຳລັງກະກຽມແຜນປະຕິບັດການ ສຳລັບການດຳເນີນການຕາມ IFRS ຕາມແຈ້ງການ. ຫຼັກການບັນຊີທີ່ນຳໃຊ້ ອາດແຕກຕ່າງຢ່າງມີສາລະສຳຄັນ ຈາກຫຼັກການບັນຊີ (IFRS).

ການສ້າງເອກະສານລາຍງານການເງິນແມ່ນ ຜູ້ບໍລິຫານໄດ້ສ້າງການຄາດຄະເນ ແລະ ວາງການສົມມຸດຖານຫຼາຍປະການ ເພື່ອ ສະ ແດງເຖິງຜົນກະທົບຕໍ່ມູນຄ່າຂອງຊັບສິນ ແລະ ໜີ້ສິນ ທີ່ໄດ້ລາຍງານ ແລະ ຈຳນວນເງິນ ລາຍຮັບ ແລະ ລາຍຈ່າຍ ໃນ ຮອບເວລາ ທີ່ໄດ້ລາຍງານ. ສະນັ້ນ, ຕົວເລກທີ່ຄາດຄະເນໄວ້ນັ້ນ ສ້າງຂຶ້ນບົນພື້ນຖານຄວາມຮູ້ທີ່ດີທີ່ສຸດ ຂອງຝ່າຍບໍລິຫານ ກ່ຽວກັບ ເຫດການ ແລະ ພາກປະຕິບັດຕົວຈິງໃນປັດຈຸບັນ ຊຶ່ງການຄາດຄະເນນັ້ນ ອາດຈະແຕກຕ່າງຈາກການຄາດຄະເນ ເບື້ອງຕົ້ນ.

ການດຳເນີນງານຕໍ່ເນື່ອງ
ສະຖານະການເງິນຂອງບໍລິສັດໃນວັນທີ 31 ເດືອນ ທັນວາ ປີ 2025 ສະແດງໃຫເຫັນວາມີພາລະໜີ້ສິນໝຸນວຽນເກີນຊັບ ສິນ ໝຸນວຽນ ຈຳນວນ 201,667 ລ້ານກີບ (ບໍ່ລວມ ລາຍການ ຂອງພາກສ່ວນທີ່ກ່ຽວຂ້ອງ ສຸດທິ). ນອກຈາກນີ້, ບໍລິສັດມີ ການກູ້ ຢືມເງິນລວມຈຳນວນ 154,596 ລ້ານກີບ (ບົດອະທິບາຍ ຂໍ້ 9) ເຊິ່ງຄົບກຳນົດຊຳລະທັງໝົດໃນວັນທີ 29 ເດືອນ ທັນວາ ປີ 2025 ແລະ ຫຼັງຈາກວັນທີ່ຂອງລາຍງານນີ້, ເງິນກູ້ດັ່ງກ່າວຍັງຄົງຄ້າງຊຳລະຢູ່.

ລາຍຮັບສຳລັບປີ 2025 ເທົ່າກັບສູນ ແລະ ກະແສເງິນສົດຈາກກິດຈະກຳດຳເນີນງານເປັນລົບ. ລາຍຮັບຂອງບໍລິສັດຂຶ້ນຢູ່ກັບ ໂຄງການຈາກລັດຖະບານ ສປປ ລາວ ເຊິ່ງຂຶ້ນຢູ່ກັບງົບປະມານປະຈຳປີຂອງລັດຖະບານ ສປປ ລາວ. ນອກຈາກນີ້, ບໍລິສັດມີ ຈຳນວນເງິນຄ້າງຊຳລະຈາກຄູ່ສັນຍາທີ່ກ່ຽວຂອງເປັນໄລຍະເວລາດົນ ລວມເປັນເງິນທັງໝົດ 470,729 ລ້ານກີບ (ບົດ ອະທິບາຍ ຂໍ້ 4).

2. ນະໂຍບາຍທາງດ້ານການບັນຊີທີ່ສຳຄັນ (ຕໍ່)

2.1 ພື້ນຖານໃນການກະກຽມ (ຕໍ່)

ການດຳເນີນງານຕໍ່ເນື່ອງ (ຕໍ່)

ຕາມສະຖານະການເຫຼົ່ານີ້, ມັນໄດ້ຊີ້ໃຫ້ເຫັນຄວາມບໍ່ແນ່ນອນທາງດ້ານ ການດຳເນີນງານຕໍ່ເນື່ອງ ທີ່ອາດຈະເຮັດໃຫ້ເກີດ ຄວາມສົງໃສຢ່າງຫຼວງຫຼາຍຕໍ່ຄວາມສາມາດ ໃນການດຳເນີນງານຢ່າງຕໍ່ເນື່ອງຂອງ ບໍລິສັດ. ເຖິງຢ່າງໃດກໍ່ຕາມ, ບໍລິສັດໄດ້ສ້າງ ແຜນຮອງຮັບ ທີ່ສຳຄັນ ເພື່ອຈັດການ ຄວາມສ່ຽງດ້ານສະພາບຄອງ. ການຈັດການຂອງບໍລິສັດໄດ້ປະຕິບັດມາດຕະການດັ່ງຕໍ່ ໄປນີ້:

- ບໍລິຫານຈັດການໜີ້ສິນໂດຍການເຈລະຈາຕໍ່ລອງ ການຊຳລະຄືນຕົ້ນທຶນ ແລະ ດອກເບ້ຍເງິນກູ້ທີ່ຄົບກຳນົດ. ເຖິງຢ່າງ ໃດກໍ່ຕາມ, ມີທາງເລືອກໜຶ່ງໃນສັນຍາກູ້ຢືມ ໂດຍບໍລິສັດສາມາດນຳໃຊ້ໜີ້ຕ່ອງຮັບຈາກ GoL ເປັນແຫຼ່ງໜຶ່ງ ສຳລັບການຊຳ ລະຄືນພາຍໃຕ້ສັນຍາ ກູ້ຢືມນີ້. ນອກຈາກນັ້ນ, ນະມື້ລາຍງານ, ຍັງບໍ່ທັນມີແຈ້ງການໃດໆຈາກຜູ້ໃຫ້ກູ້ຢືມກ່ຽວກັບເລື່ອງນີ້; ແລະ
- ພາກສ່ວນກ່ຽວຂ້ອງໄດ້ອອກຈົດໝາຍຢືນຢັນເຖິງ ບໍລິສັດ ວ່າຈະບໍ່ຮຽກເກັບ ໜີ້ຕ້ອງສົ່ງ ນະວັນທີ 31 ທັນວາ 2025, ລວມມູນຄ່າທັງໝົດ 80,911 ລ້ານກີບ ພາຍໃນ 12 ເດືອນຕໍ່ໜ້າ ເລີ່ມແຕ່ວັນທີ 31 ທັນວາ 2025 ເປັນຕົ້ນໄປ.

ດັ່ງນັ້ນ, ບໍລິສັດຍັງສືບຕໍ່ນຳໃຊ້ພື້ນຖານການດຳເນີນງານ ຢ່າງຕໍ່ເນື່ອງໃນການກະກຽມບົດລາຍງານການເງິນ.

2.2 ການແລກປ່ຽນເງິນຕາຕ່າງປະເທດ

ທຸກລາຍການເຄື່ອນໄຫວໃນເອກະສານລາຍງານການເງິນ ແມ່ນ ຖືກແປງຄ່າເປັນສະກຸນເງິນ ລາວກີບ (ກີບ).

ລາຍການທີ່ເປັນສະກຸນເງິນຕາຕ່າງປະເທດ ແມ່ນ ຖືກແປງຄ່າເປັນສະກຸນເງິນກີບ ໂດຍໃຊ້ອັດຕາແລກປ່ຽນຂອງມື້ທີ່ມີ ລາຍການເກີດຂຶ້ນ. ຊັບສິນ ແລະ ໜີ້ສິນທາງການເງິນໃນສະກຸນເງິນຕາຕ່າງປະເທດ ແມ່ນ ຖືກແປງຄ່າເປັນສະກຸນເງິນກີບ ໂດຍໃຊ້ອັດຕາແລກປ່ຽນໃນມື້ຂອງໃບລາຍງານຖານະການເງິນ, ຍົກເວັ້ນບາງສັນຍາກັບຜູ້ສະໜອງທີ່ບໍລິສັດກຳນົດ ອັດຕາ ແລກປ່ຽນແບບຄົງທີ່ ແລະ ບໍ່ຕ້ອງແປງຄ່າເປັນສະກຸນເງິນກີບທຸກສິ້ນເດືອນ ຈົນກວ່າຈະມີການຊຳລະລາຍການດັ່ງກ່າວ. ລາຍການກຳໄລ ແລະ ລາຍການຂາດທຶນທີ່ເກີດຈາກການຊຳລະ ແລະ ການແປງຄ່າຊັບສິນ ແລະ ໜີ້ສິນທາງການເງິນທີ່ເປັນ ສະກຸນເງິນຕາຕ່າງເທດແມ່ນ ໄດ້ຮັບຮູ້ໃນໃບລາຍງານຜົນໄດ້ຮັບ.

2.3 ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

ເງິນສົດ ແລະ ລາຍການທຽບເທົ່າເງິນສົດ ລວມມີເປັນເງິນສົດໃນມື, ເງິນຝາກທະນາຄານ ແລະ ເງິນລົງທຶນໄລຍະສັ້ນ ທີ່ມີ ສະພາບຄ່ອງສູງ ເຊິ່ງມີອາຍຸການຄົບກຳນົດໃນ 3 ເດືອນ ຫຼື ໜ້ອຍກວ່າ. ຢູ່ໃນໃບລາຍງານຖານະການເງິນ ເງິນເບີກເກີນບັນຊີ ແມ່ນສະແດງເປັນເງິນກູ້ຢືມໃນໜີ້ສິນໝຸນວຽນ, ຖ້າມີ.

2.4 ໜີ້ຕ້ອງຮັບທາງການຄ້າ ແລະ ໜີ້ຕ້ອງຮັບອື່ນໆ

ໜີ້ຕ້ອງຮັບທາງການຄ້າ ແມ່ນຖືກບັນທຶກຕາມຕົວຈິງຂອງມູນຄ່າໃນໃບເກັບເງິນ ແລະ ການປະເມີນມູນຄ່າຕໍ່ມາ ແມ່ນນຳມູນ ຄ່າ ຍັງເຫຼືອລົບເງິນທີ່ຫັກເພື່ອໜີ້ສົງໄສຈະສູນ ຕາມຍອດເຫຼືອໃນວັນສິ້ນປີ, ຝ່າຍບໍລິຫານພິຈາລະນາຕັ້ງຄ່າເພື່ອໜີ້ສົງໄສຈະ ສຳລັບຍອດເຫຼືອຄ້າງຫຼາຍກວ່າ 3 ປີ.

ບໍ່ມີການຕັ້ງສຳຮອງ ຂອງຍອດເຫຼືອລູກໜີ້ການຄ້າ ແລະ ລູກໜີ້ອື່ນໆຈາກພາກສ່ວນທີ່ກ່ຽວຂ້ອງ.

2. ນະໂຍບາຍທາງດ້ານການບັນຊີທີ່ສຳຄັນ (ຕໍ່)

2.5 ເຄື່ອງໃນສາງ

ເຄື່ອງໃນສາງສະແດງອອກ ຕາມລາຄາທີ່ຕ່ຳກວ່າລະຫວ່າງລາຄາຕົ້ນທຶນ ແລະ ລາຄາຂາຍອອກສຸດທິ. ຕົ້ນທຶນ ໄດ້ນຳໃຊ້ວິທີ ສະເລ່ຍຕາມນ້ຳໜັກ, ຕົ້ນທຶນຊື້ປະກອບດ້ວຍລາຄາຊື້ແລະ ຄ່າໃຊ້ຈ່າຍທາງກົງ ທີ່ຕິດພັນກັບການຊື້ເຄື່ອງໃນສາງ ເຊັ່ນ: ຄ່າທຳ ນຽມທີ່ກ່ຽວຂ້ອງກັບການນຳເຂົ້າ, ຄ່າຂົນສົ່ງ ລົບ ທຸກສ່ວນຫຼຸດທີ່ໄດຮັບ. ລາຄາຂາຍອອກສຸດທິທີ່ຄາດວ່າຈະໄດ້ຮັບແມ່ນ ລາຄາ ສິນຄ້າຄົງເຫຼືອ ສາມາດຮັບຮູ້ໃດ້ໃນໄລຍະປົກກະຕິຂອງທຸລະກິດ ຫຼັງຈາກຫັກຕົ້ນທຶນ ໃນການຂາຍອອກ. ຄ່າສູນເສຍ ມູນຄ່າ ເກີດຂຶ້ນ. ໃນກໍລະນີເຄື່ອງໃນສາງເຄື່ອນໄຫວຊ້ຳ ຫຼືລ້າສະໄໝ ແລະ ເສຍຄຸນ.

2.6 ການລົງທຶນໃນຫຼັກຊັບ

2.6.1 ຫຼັກຊັບຖືໄວ້ຈົນຄົບກຳນົດ

ຫຼັກຊັບຖືໄວ້ຈົນຄົບກຳນົດ ແມ່ນຫຼັກຊັບທີ່ຄົງທີ່ ຫຼືການຊຳລະຄືນສາມາດກຳນົດໄດ້ ແລະ ມີມື້ຄົບກຳນົດທີ່ແນ່ ນອນ ເຊິ່ງບໍລິສັດມີຈຸດປະສົງ ຫຼືສາມາດຖືໄວ້ຈົນຄົບກຳນົດເພື່ອຮັບດອກເບ້ຍ. ເມື່ອຫຼັກຊັບ ມີຈຸດປະສົງ/ກຳນົດ ແນ່ນອນທີ່ຈະຖືກຂາຍ ກ່ອນວັນຄົບກຳນົດ ແລະ ຖືກອະນຸມັດ ໂດຍຜູ້ບໍລິຫານ ແລະ ຫຼັກຊັບເຫຼົ່ານີ້ຈະຖືກຈັດ ປະເພດຄືນໃໝ່ ເປັນຫຼັກຊັບທີ່ພ້ອມສຳລັບການຂາຍ.

ຫຼັກຊັບຖືໄວ້ຈົນຄົບກຳນົດແມ່ນຖືກຮັບຮູ້ເລີ່ມຕົ້ນຈາກຕົ້ນທຶນ ແລະ ຈະຖືກນຳສະເໜີຕາມຕົ້ນທຶນໃນໄລຍະຕໍ່ມາ.

ຄ່າບໍລິການເພີ່ມເຕີມ ແລະ ສ່ວນຫຼຸດ ຈາກການຊື້ຫຼັກຊັບແມ່ນຈະຖືກຄິດໄລ່ໃນໃບລາຍງານຜົນໄດຮັບໂດຍການນຳ ໃຊ້ວິທີການຄິດໄລ່ແບບເສັ້ນຊື່ຕະຫຼອດປີນັບຈາກວັນທີທີ່ໄດຮັບມາຈົນເຖິງວັນຄົບກຳນົດ.

ຫຼັກຊັບຖືໄວ້ຈົນຄົບກຳນົດແມ່ນຈະຕ້ອງມີການທົບທວນສຳລັບຂໍ້ບົກຜ່ອງເປັນແຕ່ລະໄລຍະ. ເງິນແຮສຳລັບຫຼັກຊັບ ທີ່ມີຂໍ້ບົກຜ່ອງແມ່ນຈະຖືກສ້າງຂຶ້ນເມື່ອມີການຫຼຸດລົງຢ່າງມີຄວາມສຳຄັນ ຫຼືເປັນເວລາດົນຂອງມູນຄ່າຍຸດຕິທຳທີ່ຕ່ຳ ກວ່າຕົ້ນທຶນ. ເຊິ່ງເງິນແຮດັ່ງກ່າວຈະຖືກຮັບຮູ້ໃນ "ກຳໄລ/(ຂາດທຶນ) ສຸດທິຈາກການລົງທຶນໃນຫຼັກຊັບ" ໃນໃບ ລາຍງານຜົນໄດຮັບ.

ບໍ່ມີການຕັ້ງສຳຮອງ ຂອງຍອດເຫຼືອ ພັນທະບັດລັດຖະບານ ເຊິ່ງໄດ້ຈັດປະເພດເປັນການລົງທຶນໃນຫຼັກຊັບ ຖືໄວ້ ຈົນຄົບກຳນົດ.

2.7 ຊັບສິນເພື່ອການລົງທຶນ

ຊັບສິນທີ່ຖືຄອງ ເພື່ອຫາປະໂຫຍດຈາກລາຍໄດ້ຄ່າເຊົ່າ ຫຼືຈາກການເພີ່ມຂຶ້ນຂອງມູນຄ່າຂອງຊັບສິນ ຫຼືທັ້ງສອງຢ່າງ ແລະ ບໍ່ ໄດ້ມີໄວ້ໃນງານໂດຍກິດຈະການໃນບໍລິສັດ ຈະຖືກຈັດປະເພດເປັນ ຊັບສິນ ເພື່ອການລົງທຶນ. ລວມເຖິງຊັບສິນທີ່ຢູ່ ລະຫວ່າງ ກໍ່ສ້າງ ຫຼືພັດທະນາ ເພື່ອເປັນຊັບສິນ ເພື່ອການລົງທຶນໃນອະນາຄົດ.

ທີ່ດິນຈະຖືກບັນທຶກເປັນຊັບສິນ ເພື່ອການລົງທຶນຂອງບໍລິສັດ, ກໍຕໍ່ເມື່ອ ເຂົ້າໃນນິຍາມຂອງຊັບສິນເພື່ອການລົງທຶນ.

ຊັບສິນເພື່ອການລົງທຶນ ຈະບັນທຶກເບື້ອງຕົ້ນໂດຍລາຄາທຶນ.

ຫຼັງຈາກການຮັບຮູ້ຕົ້ນທຶນ ຊັບສິນໃນການລົງທຶນໃນເບື້ອງຕົ້ນ, ຊັບສິນດັ່ງກ່າວຕ້ອງໄດ້ຖືກ ຫັກ ຄ່າຫລຸ້ຍຫ້ຽນສະສົມ ແລະ ຄ່າເຊື່ອມສະສົມ ແລະ ທີ່ດິນບໍ່ໄດ້ຫັກຄ່າຫຼຸ້ຍຫ້ຽນ.

2. ນະໂຍບາຍທາງດ້ານການບັນຊີທີ່ສຳຄັນ (ຕໍ່)

2.8 ທີ່ດິນ, ອາຄານ ແລະ ອຸປະກອນ

ຊັບສິນ, ອາຄານແລະ ອຸປະກອນທີ່ມີຕົວຕົນທັງໝົດ ແມ່ນໄດ້ຖືກບັນທຶກຕາມມູນຄ່າຕົ້ນທຶນເດີມ ຫັກຄ່າຫຼ້ຍຫ້ຽນສະສົມ. ມູນຄ່າຕົ້ນທຶນເດີມ ລວມມີລາຍຈ່າຍໂດຍກົງເພື່ອການໄດ້ມາຂອງລາຍການນັ້ນໆ.

ຄ່າໃຊ້ຈ່າຍທີ່ເກີດຂຶ້ນພາຍຫຼັງທີ່ກ່ຽວກັບລາຍການຂອງຊັບສິນບັດຄົງທີ່ໄດ້ຖືກເພີ່ມເຂົ້າໃນມູນຄ່າຕາມບັນຊີຂອງຊັບສິນເມື່ອ ມີ ຄວາມແນ່ໃຈວ່າຈະເກີດປະໂຫຍດທາງເສດຖະກິດໃນອານາຄົດເກີນກວ່າການປະເມີນຜົນການດຳເນີນງານທີ່ມີຢູ່ຂອງຊັບ ສິນ ເຂົ້າສູ່ບໍລິສັດ ແລະ ລາຍການດັ່ງກ່າວຈະຕ້ອງວັດແທກໄດ້ຢ່າງໜ້າເຊື່ອຖື ແລະ ມູນຄ່າຕາມບັນຊີຂອງລາຍຈ່າຍດັ່ງກ່າວ ຈະຖືກ ປ່ຽນແທນ ແລະ ຖອດອອກ ຄ່າສ້ອມແປງ ແລະ ບຳລຸງຮັກສາ ແມ່ນຈະສະແດງໃນໃບລາຍງານຜົນໄດຮັບໃນ ລະຫວ່າງໄລຍະ ທາງການເງິນ ເມື່ອລາຍການນັ້ນເກີດຂຶ້ນ.

ທີ່ດິນບໍ່ໄດ້ຄິດຄ່າຫຼ້ຍຫ້ຽນ. ຄ່າຫຼ້ຍຫ້ຽນແມ່ນໄດ້ຄິດໄລ່ໂດຍການຄິດໄລ່ຄ່າຫຼ້ຍຫ້ຽນຍົນຫຼັກການ ການຄິດໄລ່ ແບບເສັ້ນຊື່ ເພື່ອຈັດສັນກັບມູນຄ່າຍັງເຫຼືອ ຂອງແຕ່ລະລາຍການຊັບສິນຕາມອາຍຸການໃຊ້ງານທີ່ຄາດຄະເນມີດັ່ງຕໍ່ໄປນີ້:

ກຳໄລ ແລະ ຂາດທຶນ ຈາກການຂາຍຊັບສິນຄົງທີ່ໄດ້ຖືກກຳນົດໂດຍການສົມທຽບລາຄາຂາຍ ຫຼືການຕົກລົງຕາມການ ພິຈາລະນາ ກັບ ມູນຄ່າຕາມບັນຊີ ແລະ ຮັບຮູ້ເຂົ້າໃນ 'ແຍກປະເພດຕ່າງຫາກ' ໃນໃບລາຍງານຜົນໄດ້ຮັບ.

ປະເພດຊັບສິນ	**ປີ**
ອາຄານ	10
ພາຫະນະ	10
ອຸປະກອນຫ້ອງການ	5
ເຟີນີເຈີ ແລະ ສິ່ງທີ່ຕິດຕັ້ງຖາວອນ	5

2.9 ເງິນກູ້ຢືມ

ເງິນກູ້ຢືມ ແມ່ນຮັບຮູ້ເບື້ອງຕົ້ນຕາມຈຳນວນເງິນທີ່ໄດ້ຮັບ.

ເງິນກູ້ຢືມ ຈັດເປັນໜີ້ສິນໝຸນວຽນ ເວັ້ນເສຍແຕ່ ບໍລິສັດ ບໍ່ມີເງື່ອນໄຂ ໂດຍການເຍື່ອນຊຳລະໜີ້ສິນ ຢ່າງໜ້ອຍ 12 ເດືອນ ຫຼັງວັນທີຂອງໃບສະຫຼຸບຊັບສິນບັດ

ຕົ້ນທຶນຂອງການກູ້ຢືມອື່ນໆທັງຫມົດ ແມ່ນໄດ້ບັນທຶກໃນໃບລາຍງານຜົນໄດຮັບ ໃນໄລຍະທີ່ລາຍການນັ້ນເກີດຂຶ້ນ.

2.10 ການຮັບຮູ້ລາຍຮັບ

ລາຍຮັບລວມມີມູນຄ່າໃນໃບເກັບເງິນສຸດທິຫັກ ສ່ວນຫຼຸດທີ່ໄດ້ຮັບ, ຖ້າມີ. ລາຍຮັບຈາກການກໍ່ສ້າງ ແລະ ບໍລິການ ຮັບ ຮູ້ເມື່ອ ມີຄວາມສ່ຽງ ແລະ ຜົນປະໂຫຍດທີ່ສຳຄັນເຈົ້າຂອງສິນຄ້າແມ່ນຖືກໂອນ ຫຼືຖືກສົ່ງໃຫ້ຜູ້ຊື້. ຕົ້ນທຶນທີ່ກ່ຽວຂ້ອງຖືກ ຮັບຮູ້ໃນ ກຳໄລຫຼືຂາດທຶນເມື່ອເກີດຂຶ້ນ.

ລາຍຮັບອື່ນໆ ແມ່ນໄດ້ຮັບຮູ້ອີງຕາມພື້ນຖານ ດັ່ງລຸ່ມນີ້:

* ລາຍຮັບຈາກດອກເບ້ຍແມ່ນຮັບຮູ້ຕາມອັດຕາພື້ນຖານຄິດໄລ່ຕາມໄລຍະເວລາ, ຄິດໄລ່ຈາກບັນຊີເງິນຕົ້ນທີ່ຍັງຄ້າງ ແລະ ອັດຕາດອກເບ້ຍໃນຊ່ວງເວລາທີ່ກຳນົດ, ເມື່ອມີຄວາມແນ່ນອນວ່າລາຍໄດ້ຈະເກີດຂຶ້ນກັບບໍລິສັດ.
* ລາຍຮັບຈາກຄ່າເຊົ່າແມ່ນຮັບຮູ້ຍົນພື້ນຖານເສັ້ນຊື່ໃນຊ່ວງເວລາທີ່ການົດ.
* ລາຍຮັບອື່ນໆແມ່ນຮັບຮູ້ໃນເກນຄ້າງຮັບຄ້າງຈ່າຍ.

2. ນະໂຍບາຍທາງດ້ານການບັນຊີທີ່ສຳຄັນ (ຕໍ່)

2.11 ສັນຍາເຊົ່າ - ທີ່ທາງບໍລິສັດເປັນຜູ້ໃຫ້ເຊົ່າ

ທີ່ດິນທີ່ທາງ ບໍລິສັດໃຫ້ເຊົ່າ ພາຍໃຕ້ສັນຍາເຊົ່າໃນການດຳເນີນທຸລະກິດ ຖືກຮັບຮູ້ເປັນຊັບສິນບັດຄົງທີ່ເພື່ອການລົງທຶນ ໃນໃບສະຫຼຸບຊັບສິນບັດ ແລະ ດິນແມ່ນບໍ່ໄດ້ຫັກຄ່າຫຼ້ຍຫ້ຽນ. ລາຍຮັບຈາກຄ່າເຊົ່າ ຖືກຮັບຮູ້ແບບເສັ້ນຊື ຕາມອາຍຸການຂອງສັນຍາ ເຊົ່າດັ່ງກ່າວ. ອ້າງອີງເຖິງ ຕາມບົດອະທິບາຍຂໍ້5.

2.12 ອາກອນ

ບໍລິສັດໄດ້ບັນທຶກອາກອນກຳໄລ ຕາມເກນຄົງຄ້າງ. ບໍລິສັດບໍ່ໄດ້ບັນທຶກອາກອນກຳໄລຕ້ອງຈ່າຍ ຫຼືຕ້ອງຮັບໃນອະນາຄົດ ເຊິ່ງເກີດ ຈາກສ່ວນຜິດຕ່າງຊົ່ວຄາວ. ອາກອນກຳໄລ ຖືກຄິດໄລ່ໂດຍການເອົາລາຍຮັບຈາກການກໍ່ສ້າງທີ່ເກີດຂຶ້ນໃນປີຄຸນໃຫ້ອັດຕາສ່ວນ ກຳໄລລວມ ແລະ ຄູນກັບອັດຕາອາກອນກຳໄລ (ຕາມບົດອະທິບາຍຂໍ້17). ອາກອນກຳໄລຈະໄດ້ຮັບການສະສາງຄືນເມື່ອ ລັດຖະບານຈ່າຍເງິນໃຫ້ແກ່ບໍລິສັດ.

ໃນ ສປປ ລາວ ອາກອນລາຍໄດ້ຕ້ອງໄດ້ຮັບການກວດກາຄືນຈາກເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ບົນພື້ນຖານທົ່ວໄປ. ບັນຫາທາງອາກອນທີ່ພົບເຫັນອາດຈະຕ້ອງມີຄຳເຫັນ ແລະ ຕີລາຄາ ໂດຍພາກສ່ວນທີ່ກ່ຽວຂ້ອງ ເຊິ່ງອາດຈະມີຜົນກະທົບຕໍ່ກັບບໍລິສັດ.

ແລະ ອາດສົ່ງຜົນໃຫເກີດການຊຳລະອາກອນເພີ່ມເຕີມ ຫຼືຮັບຄືນ ໃນຄວາມຈຳເປັນ. ເຫດນີ້ຈະມີຜົນໃນການຈ່າຍເງິນ ຫຼືຮັບຄືນ ຈະຖືກຮັບຮູ້ເປັນຄ່າໃຊ້ຈ່າຍອາກອນລາຍໄດ້ໃນປີທີ່ມີການກວດສອບໄດ້ສຳເລັດ.

2.13 ເງິນແຮ

ເງິນແຮ ຖືກບັນທຶກບັນຊີໃນເວລາມີພັນທະໃນປະຈຸບັນຕາມກົດໝາຍ ຫຼືພັນທະການກໍ່ສ້າງ ເຊິ່ງເກີດຈາກເຫດການຜ່ານມາ, ເປັນໄປໄດ້ວ່າ ແຫຼ່ງຊັບພະຍາກອນຈະໄຫຼອອກເພື່ອສະສາງພັນທະ ແລະ ຈຳນວນເງິນສາມາດຄາດຄະເນຢ່າງໜ້າເຊື່ອຖືໄດ້, ຍົກເວັ້ນເງິນແຮ ເພື່ອຜົນປະໂຫຍດພະນັກງານ ຕາມທີ່ໄດ້ອະທິບາຍຂໍ້ 2.14.

2.14 ຜົນປະໂຫຍດພະນັກງານ

ອີງຕາມກົດໝາຍແຮງງານ ສປປ ລາວ, ເມື່ອພະນັກງານຈະບຳນານ ໂດຍຄົບກຳນົດ ແລະ ເງື່ອນໄຂທີ່ ກຳນົດໄວ້ໃນກົດໝາຍແຮງງານ. ເພາະສະນັ້ນບໍລິສັດຈະມີພັນທະທີ່ຕ້ອງຈ່າຍເງິນບຳນານ.

ເງິນແຮ ສຳລັບຜົນປະໂຫຍດພະນັກງານທັງໝົດບໍ່ໄດ້ຮັບຮູ້ເປັນໜີ້ສິນໃນແຕ່ລະປີ. ໜີ້ສິນ ແລະ ລາຍຈ່າຍສຳລັບຜົນປະໂຫຍດພະນັກງານຈະຮັບຮູ້ໃນໃບສະຫລຸບຊັບສິນບັດ ແລະ ໃນໃບລາຍງານຜົນໄດຮັບ ຕາມຈຳນວນທີ່ເກີດຂຶ້ນຈິງ ທີ່ຮອດກຳນົດເວລາບຳນານ.

2.15 ທຶນ

ຮຸ້ນສາມັນ ແລະ ຮຸ້ນຕາມຄວາມຕ້ອງການທີ່ບໍ່ສາມາດແລກຊື້ໄດ້ກັບເງິນປັນຜົນທີ່ຕັດສິນໃຈຖືກຈັດປະເພດເປັນທຶນ.

ສ່ວນເພີ່ມຂອງມູນຄ່າຮຸ້ນ ແມ່ນສ່ວນເກີນລະຫວ່າງລາຄາສະເໜີຂາຍຂອງການອອກຮຸ້ນເພີ່ມເຕີມ ແລະ ມູນຄ່າຮຸ້ນ. ຄ່າໃຊ້ຈ່າຍໃນການອອກຮຸ້ນ (ເຊັ່ນ: ຄ່າປະກັນໄພ ແລະ ການປະເມີນມູນຄ່າທີ່ກ່ຽວຂ້ອງ ອື່ນໆ. ຄ່າໃຊ້ຈ່າຍທີ່ປຶກສາ) ຖືກຮັບຮູ້ເປັນຄ່າໃຊ້ຈ່າຍໃນໄລຍະເວລາ.

ລາຍຮັບພື້ນຖານຕໍ່ຮຸ້ນ ແມ່ນຄິດໄລ່ ໂດຍການແບ່ງກຳໄລສຸດທິຫຼືຂາດທຶນ ທີ່ເປັນຜົນມາຈາກຜູ້ຖືຮຸ້ນ ຂອງບໍລິສັດດ້ວຍຕົວເລກສະເລ່ຍນ້ຳໜັກຂອງຮຸ້ນສາມັນ ໃນລະຫວ່າງໄລຍະເວລາ.

3. ເງິນສົດ ແລະ ລາຍການທຽບເທົ່າເງິນສົດ

	ທົບທວນຄືນ 30 ກັນຍາ 2026 ລ້ານກີບ	ກວດສອບ 31 ທັນວາ 2025 ລ້ານກີບ

ເງິນສົດໃນມື	143	3
ເງິນຝາກທີ່ສາມາດຖອນຄືນໄດ້ໃນເວລາທີ່ຕ້ອງການກັບສະພາບັນການເງິນ	44	183
ລວມ	**187**	**186**

4. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ

	ທົບທວນຄືນ 30 ກັນຍາ 2026 ລ້ານກີບ	ກວດສອບ 31 ທັນວາ 2025 ລ້ານກີບ
ໜີ້ຕ້ອງຮັບທາງການຄ້າ	206,785	222,698
ຫັກ: ຄ່າເຜື່ອໜີ້ສົງໄສຈະສູນ	(206,785)	(222,698)
ໜີ້ຕ້ອງຮັບທາງການຄ້າ, ສຸດທິ (ກ)	-	-
ໜີ້ຕ້ອງຮັບ ຈາກ ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 19) ຂ)	470,729	470,964
ໜີ້ຕ້ອງຮັບອື່ນໆ	17,621	27,160
ລວມ	**488,350**	**498,124**

(ກ) ຍອດເຫຼືອໜີ້ຕ້ອງຮັບການຄ້າ ໃນວັນທີ 30 ກັນຍາ 2026 ມີອາຍຸການດັ່ງຕໍ່ໄປນີ້:

	ທົບທວນຄືນ 30 ກັນຍາ 2026 ລ້ານກີບ	ກວດສອບ 31 ທັນວາ 2025 ລ້ານກີບ
ບໍ່ຄົບກຳນົດ:	-	-
ເກີນກຳນົດ:	-	-
0 – 3 ເດືອນ	-	-
3 – 6 ເດືອນ	-	-
ຫຼາຍກວ່າ 1 ປີ	-	-
ຫຼາຍກວ່າ 2 ປີ	-	-
ຫຼາຍກວ່າ 3 ປີ	206,785	222,698
ຍອດລວມໜີ້ຕ້ອງຮັບການຄ້າ, ສຸດທິ	206,785	222,698
ຫັກ: ຄ່າເຜື່ອໜີ້ສົງໄສຈະສູນ*	(206,785)	(222,698)
ລວມ	-	-

4. ໜີ້ຕ້ອງຮັບການຄ້າ ແລະ ໜີ້ຕ້ອງຮັບອື່ນໆ, ສຸດທິ (ຕໍ່)

*ບໍລິສັດມີລູກຄ້າພຽງລາຍດຽວຄືໜ່ວຍງານລັດຖະບານ ສປປ ລາວ, ແລະ ໃນປະຈຸບັນບໍລິສັດ, ຢູ່ລະຫ່ວ່າງການເຈລະຈາເງື່ອນໄຂໃໝ່ໃນ ການຊຳລະເງິນກັບລັດຖະບານ. ເຊິ່ງບໍລິສັດຈະພິຈາລະນາຕັ້ງຄ່າເຜື່ອໜີ້ສົງໄສຈະສູນຕາມກົດເກນບາງປະການ. ຝ່າຍບໍລິຫານພິຈາລະນາຕັ້ງຄ່າ ເຜື່ອໜີ້ສົງໄສຈະສູນ 100% ສຳລັບຍອດເຫຼືອ ທີ່ເກີນ 3 ປີ ເປັນການສຳຮອງ. ຍົກເວັ້ນ ຖ້າມີສັນຍາທີ່ຈະຈ່າຍຈາກລັດຖະບານ.

5. ຊັບສິນບັດຄົງທີ່ເພື່ອການລົງທຶນ

	ທີ່ດິນ ລ້ານກີບ	ລວມ ລ້ານກີບ

ຍອດຍົກມາ ນະວັນທີ 1 ມັງກອນ 2026	189,442	189,442
ຕົ້ນທຶນ	-	-
ຫັກ: ຄ່າຫຼຸ້ຍຫ້ຽນສະສົມ	-	-
ຍອດເຫຼືອທ້າຍ ສຸດທິ ໃນວັນທີ 30 ກັນຍາ 2026 - ທົບທວນຄືນ	189,442	189,442

ບໍລິສັດໄດເຊັ້ນສັນຍາເຊົ່າທີ່ດິນໄລຍະຍາວກັບລູກຄ້າເປັນເວລາ 15 ປີ ເລີ່ມແຕ່ປີ 2023–2038.

ທີ່ດິນ 189,442 ລ້ານກີບ ແມ່ນຫຼັກຊັບຄ້ຳປະກັນໃຫ້ເງິນກູ້ຂອງກຸ່ມບໍລິສັດ ພູສີ.

6. ຊັບສິນໝຸນວຽນອື່ນໆ

	ທົບທວນຄືນ 30 ກັນຍາ 2026 ລ້ານກີບ	**ກວດສອບ 31 ທັນວາ 2025 ລ້ານກີບ**
ເງິນລ່ວງໜ້າໃຫ້ຜູ້ສະໜອງ:	207	205
ເງິນລ່ວງໜ້າໃຫ້ພະນັກງານ:	22	38
ຄ່າໃຊ້ຈ່າຍ ຈ່າຍລ່ວງໜ້າ	60	61
ລວມ	**289**	**304**

7. ທີ່ດິນ, ອາຄານ ແລະ ອຸປະກອນ, ສຸດທິ

	ທີ່ດິນ ລ້ານກີບ	ອາຄານ ລ້ານກີບ	ພາຫະນະ ລ້ານກີບ	ເຟີນີເຈີ ແລະ ເຄື່ອງຕິດຕັ້ງ ລ້ານກີບ	ຄອມພິວເຕີ ແລະ ເຄື່ອງໃຊ້ຫ້ອງການ ລ້ານກີບ	ລວມ ລ້ານກີບ
ໃນວັນທີ 31 ທັນວາ 2025						
ຕົ້ນທຶນ	308,179	18	34,652	1,061	448	**344,358**
ຫັກ: ຄ່າຫຼຸ້ຍຫ້ຽນສະສົມ	-	(18)	(33,351)	(1,061)	(448)	**(34,878)**
ຄ່າດ້ອຍຄ່າ	-	-	(1,299)	-	-	**(1,299)**
ມູນຄ່າຍັງເຫຼືອຕາມບັນຊີສຸດທິ	308,179	-	2	-	-	**308,181**
ຍອດຍົກມາຕາມບັນຊີສຸດທິ	**308,179**	–	2	–	–	**308,181**
ເພີ່ມຂຶ້ນ	14,563	-	-	-	-	**14,563**
ສະສາງຕົ້ນທຶນ*	-	-	-	-	-	**-**
ຄ່າຫຼຸ້ຍຫ້ຽນ	-	-	-	-	-	**-**
ມູນຄ່າຍັງເຫຼືອ ວັນທີ 30 ກັນຍາ 2026	**322,742**	**-**	**2**	**-**	**-**	**322,744**

8. ໜີ້ຕ້ອງສົ່ງທາງການຄ້າ ແລະ ໜີ້ຕ້ອງສົ່ງອື່ນໆ

	ທົບທວນຄືນ 30 ກັນຍາ 2026 ລ້ານກີບ	ກວດສອບ 31 ທັນວາ 2025 ລ້ານກີບ
ໜີ້ຕ້ອງສົ່ງທາງການຄ້າ – ພາກສ່ວນອື່ນ	48,620	10,866
ໜີ້ຕ້ອງສົ່ງອື່ນໆ – ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 19) ຂ)	66,477	82,104
	115,098	**92,970**

9. ເງິນກູ້ຢືມ, ສຸດທິ

	ທົບທວນຄືນ 30 ກັນຍາ 2026 ລ້ານກີບ	ກວດສອບ 31 ທັນວາ 2025 ລ້ານກີບ
ສະຖາບັນການເງິນ	154,596	154,596
ລວມ	**154,569**	**154,596**
ຕ່ຳກວ່າ 1 ປີ	154,596	154,596
ຫຼາຍກວ່າ 1 ປີ ແຕ່ບໍ່ເກີນ 5 ປີ	-	-
ລວມ	**154,569**	**154,596**

ບໍລິສັດ ໄດ້ເຊັນສັນຍາເງິນກູ້ຢືມຈຳນວນ 36,000 ລ້ານກີບ ກັບທະນາຄານການຄ້າພາຍໃນປະເທດ ເພື່ອເປັນທຶນໝຸນວຽນ ສຳລັບ ການກໍ່ສ້າງ ທາງ ເຊິ່ງມີອັດຕາດອກເບ້ຍ 17% ຕໍ່ປີ ນັບຕັ້ງແຕ່ ວັນທີ 29 ພຶດສະພາ 2015. ເງິນກູ້ຢືມນີ້ແມ່ນມີທີ່ດິນຂອງ ບໍລິສັດ ເປັນຫຼັກຊັບຄ้ำປะกัน (ບົດອະທິບາຍຂໍ້ 5) ແລະ ທີ່ດິນຂອງພາກສ່ວນທີ່ກ່ຽວຂ້ອງ, ບໍລິສັດຕ້ອງໄດ້ຊຳລະຕົ້ນທຶນພາຍໃນ 3 ປີ ນັບ ແຕ່ວັນທີ່ທີ່ເບີກເງິນກູ້ຄັ້ງທຳອິດໃນແຕ່ລະປີ ແລະ ຈ່າຍດອກເບ້ຍເປັນລາຍເດືອນ.

ໃນລະຫວ່າງໄລຍະຮອບເວລາ ບໍ່ໄດ້ມີການຊຳລະເງິນກູ້.

ໃນວັນທີບົດລາຍງານ, ການກູ້ຢືມເງິນໄລຍະໃຫມ່ແມ່ນໄດ້ປຶກສາຫາລືກັບຜູ້ໃຫ້ກູ້, ສະນັ້ນ ບໍລິສັດຮັບຮູ້ຄ่าใช้จ่ายดอกเบ้ยโดยอิง ใส่เงื่อนไขถ้างก่าอ้างเทิง.

ບໍລິສັດ ໄດ້ເຮັດສັນຍากู้ยืมเงิน อิงเงินจำนวน 300 ตื้กีบ กับทะนาคานการค้าพายในประเทด เชิ่งมีอัดตาดอกเบ้ย 9.50% ต่ำปี เลิ่มแต่อันที 29 ทันวา 2022 ทา 29 ทันวา 2027. เงินกู้ยืมนี้แม่นมีที่ดินของบ้ลิสัด เป้นหลักซับค้ำ ปะกัน (บิดอะทิบายข้ 7) และ ที่ดินของพากส่วนที่ก่ยวข้อง. บ้ลิสัดต้องช้ำละคืนต้นทินเงินกู้ยืมจอดทำอิดในอันที 29 ทันวา 2025 และ ช้ำละดอกเบ้ยเป้นลายเดือน.

10. ອາກອນກຳໄລຄ้างจ่าย

ອີງຕາມການປະຕິບັດການຊຳລະອາກອນລະຫວ່າງໝ່ວຍງານສ່ວຍสาอากอน ແລະ ບໍລິສັດ, ອາກອນກຳໄລຖືກຄິດໄລ່ໂດຍການປະ ເມີນອັດຕາກຳໄລສຸດທີ ຄູນໃຫ້ອັດຕาอากอนกำไล ແລະ ລายได้จากการก่อสร้าง, ອากอนกำไลจะได้รับการสะสางคืนเมื่อ ลัดถะบานจ่ายเงินให้แก่บ้ลิสัด.

11. ໜີ້ສິນໝຸນວຽນອື່ນໆ

	ທີ່ບທວນຄືນ 30 ກັນຍາ 2026 ລ້ານກີບ	ກວດສອບ 31 ທັນວາ 2025 ລ້ານກີບ
ອາກອນມູນຄ່າເພີ່ມຄ້າງຈ່າຍ*	18,816	20,262
ດອກເບ້ຍຄ້າງຈາກຈາກສະຖາບັນ	44,440	32,929
ເງິນຮັບລ່ວງໜ້າຈາກ ຜູ້ຮັບເໝົາ	930	930
ເງິນຮັບລ່ວງໜ້າຈາກລັດຖະບານ	893	893
ອື່ນໆ	1,367	3,085
ລວມ	**66,447**	**58,099**

* ອາກອນມູນຄ່າເພີ່ມຄ້າງຈ່າຍ ໄດ້ຖືກຄິດໄລ່ໂດຍ ຄຸນໃຫ້ 10% ຂອງລາຍຮັບຈາກການກໍ່ສ້າງ ແລະ ຈະຖືກຈ່າຍກໍ່ຕໍ່ເມື່ອ ລັດຖະບານລາວຊຳລະໜີ້ໃຫ້ບໍລິສັດ.

12. ທຶນຈົດທະບຽນ ແລະ ສ່ວນເພີ່ມມູນຄ່າຊົ້ນໃນທຶນຈົດທະບຽນ

	ຈຳນວນຂອງ ຮຸ້ນ ລ້ານຮຸ້ນ	ຮຸ້ນສາມັນ ລ້ານກີບ	ສ່ວນເພີ່ມມູນ ຄ່າຮຸ້ນ ລ້ານກີບ	ລວມ ລ້ານກີບ
ໃນວັນທີ 1 ມັງກອນ 205	582	582,000	12,540	594,540
ອອກຮຸ້ນ	2,328	-	-	-
31 ທັນວາ 2025	**2,910**	**582,000**	**12,540**	**594,540**
ໃນວັນທີ 1 ມັງກອນ 206	2,910	582,000	12,540	594,540
ອອກຮຸ້ນ	-	-	-	-
30 ກັນຍາ 2026	**2,910**	**582,000**	**12,540**	**594,540**

ບໍລິສັດ ເກີດມີສ່ວນເພີ່ມຂອງມູນຄ່າຮຸ້ນ ຈຳນວນ 12,540 ລ້ານກີບ ແລະ ຖືກຈົດທະບຽນເຂົ້າໃນຕະຫຼາດຫຼັກຊັບໃນປີ 2017.

ວັນທີ 13 ພຶດສະພາ 2025, ບໍລິສັດໄດ້ປັບປຸງໃບທະບຽນວິສາຫະກິດກັບ ກະຊວງອຸດສາຫະກຳ ແລະ ການຄ້າ ເພື່ອສະແດງໃຫ້ເຫັນເຖິງການຕັດແກ້ໂຄງສ້າງຂອງຮຸ້ນ.

13. ສຳຮອງຕາມລະບຽບການ

ສຳຮອງຕາມລະບຽບການແມ່ນຕັ້ງຂຶ້ນຕາມກົດໝາຍວິສາຫະກິດ ຂອງ ສປປ ລາວ ເຊິ່ງກຳນົດໃຫ້ຫັກ 10% ຂອງກຳໄລສຸດທິ ປະຈຳ ປີ ພາຍຫລັງທີ່ໄດ້ຫັກເງິນຂາດທຶນ ເປັນເງິນສຳຂອງຈົນກວ່າເງິນສຳຮອງດັ່ງກ່າວຮອດ 50% ຂອງທຶນຈົດທະບຽນ.

14. ເງິນປັນຜົນ

2026:
ໃນກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີທີ່ໄດ້ຈັດຂຶ້ນໃນວັນທີ 29 ເມສາ 2026, ຜູ້ຖືຮຸ້ນໄດ້ອະນຸມັດບໍ່ຈ່າຍເງິນປັນຜົນສຳລັບປີ 2025 ເນື່ອງຈາກຂາດທຶນຈາກການດຳເນີນງານ.
2025:
ໃນກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີທີ່ໄດ້ຈັດຂຶ້ນໃນວັນທີ 25 ເມສາ 2025, ຜູ້ຖືຮຸ້ນໄດ້ອະນຸມັດບໍ່ຈ່າຍເງິນປັນຜົນສຳລັບປີ 2024 ເນື່ອງຈາກຂາດທຶນຈາກການດຳເນີນງານ.
2024:
ໃນກອງປະຊຸມສາມັນ ຜູ້ຖືຮຸ້ນ ປະຈຳປີທີ່ໄດ້ຈັດຂຶ້ນວັນທີ 26 ເມສາ 2024. ຜູ້ຖືຮຸ້ນໄດ້ມີມະຕິຕົກລົງປະກາດຈ່າຍເງິນປັນຜົນ ຈາກ ກຳໄລສະສົມທີ່ຍັງບໍ່ໄດ້ຈັດສັນ ພາຍຫຼັງການຈັດສັນເຂົ້າຄັງສຳຮອງຕາມກົດໝາຍ ແລະ ຈາກກຳໄລສຸດທິປີ 2023 ຈຳນວນ 22 ກີບ ຕໍ່ຮຸ້ນ ລວມເປັນຈຳນວນ 12,804 ລ້ານກີບ ແລະ ໄດ້ຈ່າຍຄົບໝົດໃນລະຫວ່າງປີ.

15. ລາຍຈ່າຍຕາມລັກສະນະ

	ທີ່ຫວນຄືນ 30 ກັນຍາ 2026 ລ້ານກີບ	ທີ່ຫວນຄືນ 30 ກັນຍາ 2025 ລ້ານກີບ
ລາຍຈ່າຍພະນັກງານ	405	217
ລາຍຈ່າຍຄ່າຫລຸ້ຍຫ້ຽນ (ບົດອະທິບາຍທີ 7)	-	-
ລາຍຈ່າຍອື່ນໆ	328	373
ລາຍຈ່າຍທີ່ປຶກສາ*	135	132
ລາຍຈ່າຍຄ່າສ້ອມແປງ ແລະ ບຳລຸງຮັກສາ		27
ອັດຖຸ		
ລາຍຈ່າຍຄ່າເດີນທາງ	-	-
ລວມ	**868**	**749**

16. ລາຍຈ່າຍທາງການເງິນ

	ທີ່ຫວນຄືນ 30 ກັນຍາ 2026 ລ້ານກີບ	ທີ່ຫວນຄືນ 30 ກັນຍາ 2025 ລ້ານກີບ
ລາຍຈ່າຍດອກເບ້ຍ ຈາກເງິນກູ້ຢືມ		
- ສະຖາບັນການເງິນ	3,521	4,062
ລວມ	**3,521**	**4,062**

17. ລາຍຈ່າຍອາກອນກຳໄລ

ຕາມຫລັກການຊຳລະອາກອນກຳໄລ ລະຫວ່າງເຈົ້າໜ້າທີ່ສ່ວຍສາອາກອນ ແລະ ບໍລິສັດ ທີ່ໄດ້ອະທິບາຍໄວ້ໃນ ຕາມຫຼັກການຊຳລະອາກອນກຳໄລ ລະຫວ່າງ ເຈົ້າໜ້າທີ່ສ່ວຍສາອາກອນ (ບົດອະທິບາຍຂໍ້ 10), ອາກອນກຳໄລ ແມ່ນສະແດງເຖິງໜີ້ຕ້ອງສົ່ງ ອາກອນກຳໄລຈາກລາຍຮັບຂອງການກໍ່ສ້າງ, ແຕ່ລັດຖະບານ ຂອງ ສປປ ລາວ ຍັງບໍ່ທັນໄດ້ຊຳລະເງິນ.

18. ກຳໄລ/ຂາດທຶນ ພື້ນຖານຕໍ່ຮຸ້ນ

ໃນວັນທີ 30 ກັນຍາ 2026, ກຳໄລ ພື້ນຖານຕໍ່ຮຸ້ນແມ່ນຄິດໄລ່ໂດຍການແບ່ງປັນ ກຳໄລ ສຸດທິ ຂອງຜູ້ຖືຮຸ້ນຂອງບໍລິສັດ ໂດຍຈຳນວນສະເລ່ຍຂອງຮຸ້ນສາມັນໃນລະຫວ່າງຮອບເວລາ,

	ທີ່ຫວນຄືນ 30 ກັນຍາ 2026 ລ້ານກີບ	ທີ່ຫວນຄືນ 30 ກັນຍາ 2025 ລ້ານກີບ
ຈຳນວນສະເລ່ຍຂອງຮຸ້ນສາມັນ (ລ້ານຮຸ້ນ)	776	776
(ຂາດທຶນ) ສຸດທິໃນຮອບເວລາ ຂອງຜູ້ຖືຮຸ້ນ (ລ້ານກີບ)	13,815	10,740
(ຂາດທຶນ) ພື້ນຖານຕໍ່ຮຸ້ນ (ກີບ)	**17.80**	**13.84**

ບໍລິສັດ ໄດ້ຄິດໄລ່ຄືນ ກຳໄລ ພື້ນຖານຕໍ່ຮຸ້ນ ສຳລັບຮອບເວລາກ່ອນ ວັນທີ 30 ກັນຍາ 2026 ເພື່ອຈຸດປະສົງການປຽບທຽບ ຂໍ້ມູນ ທາງການເງິນ, ເຊິ່ງຄິດໄລ່ໂດຍການນຳໃຊ້ການສະເລ່ຍຂອງຮຸ້ນສາມັນ ຄືກັບວ່າມູນຄ່າຮຸ້ນສ່ວນ ແລະ ຈຳນວນທຶນທີ່ອອກ ແລະ ຊຳລະແລ້ວ ແມ່ນມີການປ່ຽນແປງທີ່ສອດຄ່ອງກັບການປ່ຽນແປງຂອງມູນຄ່າຮຸ້ນ ແລະ ຈຳນວນທຶນຮຸ້ນທີ່ອອກ ແລະ ຊຳລະແລ້ວໃນ ຊ່ວງທ້າຍເດືອນກັນຍາ 2026.

19. ລາຍການເຄື່ອນໄຫວກັບພາກສ່ວນທີ່ກ່ຽວຂ້ອງ

ລາຍການເຄື່ອນໄຫວທີ່ສຳຄັນກັບພາກສ່ວນທີ່ກ່ຽວຂ້ອງໃນລະຫວ່າງຮອບເວລາ ໄດ້ວິເຄາະດັ່ງລຸ່ມນີ້:

ກ. ສິນຄ້າ ຫຼື ບໍລິການ ແລະ ອື່ນໆ

	ທີ່ຫວນຄືນ 30 ກັນຍາ 2026 ລ້ານກີບ	ທີ່ຫວນຄືນ 30 ກັນຍາ 2025 ລ້ານກີບ
ລາຍຮັບຈາກການເຊົ່າດິນຈາກພາກສ່ວນກ່ຽວຂ້ອງ	2,290	2,290
ລາຍຈ່າຍຄ່ານ້ຳມັນ	132	52
ຄ່າເຊົ່າ	45	45

ຂ. ຍອດຄ້າງຊຳລະຈາກພາກສ່ວນກ່ຽວຂ້ອງ

	ທີ່ຫວນຄືນ 30 ກັນຍາ 2026 ລ້ານກີບ	ກວດສອບ 31 ທັນວາ 2025 ລ້ານກີບ
ໜີ້ຕ້ອງຮັບກັບພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍ ຂໍ້ 4)*	470,729	470,964
ເງິນໃຫ້ກູ້ຢືມໄລຍະສັ້ນແກ່ພາກສ່ວນທີ່ກ່ຽວຂ້ອງ	505	505
ເຈົ້າໜີ້ອື່ນໆ - ພາກສ່ວນທີ່ກ່ຽວຂ້ອງ (ບົດອະທິບາຍຂໍ້ 8)	66,447	82,104

ຈຳນວນເງິນກັບພາກສ່ວນທີ່ກ່ຽວຂ້ອງປະກອບມີ ກຸ່ມບໍລິສັດ ພູສີ ຈຳກັດຜູ້ດຽວ ແລະ ພາກສ່ວນທີ່ກ່ຽວຂ້ອງອື່ນໆ ໂດຍ ບໍ່ມີດອກເບ້ຍ ແລະ ສາມາດຮຽກເກັບໄດ້ໃນເວລາທີ່ຕ້ອງການ.

ຄ. ຄ່າຕອບແທນຜູ້ບໍລິຫານ

ບໍ່ມີຜົນປະໂຫຍດທີ່ໄດ້ຈ່າຍໃຫ້ຜູ້ບໍລິຫານ ໃນລະຫວ່າງຮອບເວລາ.

20. ເຫດການທີ່ເກີດຂຶ້ນຫລັງມື້ລາຍງານ

ບໍ່ມີເຫດການທີ່ເປັນສາລະສຳຄັນເກີດຂຶ້ນຫລັງຈາກວັນທີ 30 ກັນຍາ 2026 ທີ່ຮຽກຮ້ອງໃຫ້ມີການດັດແກ້ ຫຼື ເປີດເຜີຍໃນເອກະສານລາຍງານການເງິນ.